ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ນາຍົກລັດຖະມົນຕີ

ເລກທີ 107 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 7. 9. 2012

ກະຊວງອຸດສາຫະກຳ ແລະ ການຄ້າ
ເລກທີ 1855
ວັນທີ 10/9/12

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມ... ທົ່ວໄປ
3267
11.9.12

# ຂໍ້ຕົກລົງ

## ວ່າດ້ວຍການຮັບຮອງເອົາການປັບປຸງບັນຊີປະເພດທຸລະກິດຄວບຄຸມ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.
- ອີງຕາມ ວັກ 3 ມາດຕາ 2 ຂອງກົດໝາຍ ວ່າດ້ວຍວິສາຫະກິດ ສະບັບເລກທີ 11/ສພຊ, ລົງວັນທີ 09 ພະຈິກ 2005.
- ອີງຕາມ ມາດຕາ 5 ຂອງດຳລັດ ວ່າດ້ວຍການຮັບຮອງເອົາບັນຊີປະເພດທຸລະກິດຄວບຄຸມ ສະບັບເລກທີ 68/ນຍ, ລົງວັນທີ 28 ເມສາ 2008
- ອີງຕາມເອກະສານສະເໜີຂອງກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1424/ອຄ, ລົງວັນທີ 13 ກໍລະກົດ 2012.

## ນາຍົກລັດຖະມົນຕີ ຕົກລົງ

ມາດຕາ 1. ຮັບຮອງເອົາບັນຊີທີ່ຕ້ອງໄດ້ຮັບການກວດສອບ ແລະ ພິຈາລະນາເຫັນດີຈາກຂະແໜງການກ່ຽວຂ້ອງກ່ອນຂຶ້ນທະບຽນວິສາຫະກິດ ສະບັບປັບປຸງ ຫລື ບັນຊີປະເພດທຸລະກິດຄວບຄຸມ (ກ.02.-68/ນຍ.2012).

ບັນຊີປະເພດທຸລະກິດຄວບຄຸມ (ກ.20-68/ນຍ.2012) ສະບັບນີ້ປ່ຽນແທນສະເພາະບັນຊີປະເພດທຸລະກິດຄວບຄຸມ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 1 (ເອກະສານຄັດຕິດ “ກ”) ຂອງດຳລັດເລກທີ 68/ນຍ, ສ່ວນດຳລັດດັ່ງກ່າວ ຍັງມີຜົນສັກສິດ.

ມາດຕາ 2. ໃຫ້ກະຊວງ ອຸດສາຫະກຳ ແລະ ການຄ້າ ເປັນໃຈກາງປະສານກັບຂະແໜງການທີ່ກ່ຽວຂ້ອງໃນການເຜີຍແຜ່ຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 3. ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

ທອງສິງ ທຳມະວົງ

## ບັນຊີ ກ.02-68/ນຍ.2012

## ບັນຊີປະເພດທຸລະກິດຄວບຄຸມ ຫຼື ບັນຊີປະເພດທຸລະກິດທີ່ຕ້ອງກວດສອບຜ່ານ ຂະແໜງການກ່ຽວຂ້ອງ ກ່ອນການຂຶ້ນທະບຽນວິສາຫະກິດ ( ສະບັບປັບປຸງ )

| ຂະແໜງການ | ເລກລະຫັດ ISIC | ປະເພດທຸລະກິດ | ພາກສ່ວນ ຮັບຜິດຊອບ |
|---|---|---|---|
| ກະສິກຳ, ປ່າໄມ້ ແລະ ການປະມົງ | | | |
| | 0170 | ການລ່າເນື້ອ, ຫ້າງແຮ້ວ ແລະ ກິດຈະການ ບໍລິການທີ່ກ່ຽວພັນ | ກ/ຊ ກກປ |
| | 0210 | ການປູກໄມ້ ແລະ ການເຄື່ອນໄຫວກ່ຽວກັບປ່າໄມ້ | ກ/ຊ ກກປ |
| | 0220 | ການຂຸດຄົ້ນໄມ້ | ກ/ຊ ກກປ |
| | 0230 | ການເກັບເຄື່ອງປ່າຂອງດົງ ຫຼື ພືດຜົນຈາກປ່າໄມ້ | ກ/ຊ ກກປ |
| | 0312 | ການປະມົງໃນແມ່ນ້ຳ | ກ/ຊ ກກປ |
| ອຸດສາຫະກຳປຸງແຕ່ງ | | | |
| | 1313 | ການຕົບແຕ່ງແຜ່ນແພສຳເລັດຮູບ ( ກໍລະນີມີການຟອກ ແລະ ການຍ້ອມສີແຜ່ນແພ, ເສັ້ນໄໝ, ເສັ້ນໄຍ, ເຄື່ອງໃຊ້ຈາກແຜ່ນແພ, ລວມທັງການຖັກຕ່ຳແຜ່ນ ແລະ ການຟອກເຄື່ອງນຸ່ງຫົ່ມ). | ກ/ຊ ອຄ |
| | 1511 | ການເອືອບ ແລະ ການຟອກໜັງສັດ, ການຕັດແຕ່ງ ແລະ ຍ້ອມສີໜັງຂົນສັດ | ກ/ຊ ອຄ |
| | 1701 | ການຜະລິດເຍື້ອເຈ້ຍ, ເຈ້ຍ ແລະ ກະດາດແຂງ ( ບໍ່ລວມສິ່ງທີ່ເປັນຜະລິດຕະພັນຫັດຖະກຳ ). | ກ/ຊ ອຄ |
| | 1812 | ການເຄື່ອນໄຫວບໍລິການທີ່ກ່ຽວພັນກັບການພິມ | ກ/ຊ ຖວທ |
| | 1920 | ການປະດິດ ຜະລິດຕະພັນນ້ຳມັນກັ່ນກອງ | ກ/ຊ ອຄ |
| | 2011 | ການຜະລິດສານເຄມີພື້ນຖານ | ກ/ຊ ອຄ |
| | 2021 | ການຜະລິດຢາຂ້າແມງໄມ້ ແລະ ຜະລິດຕະພັນເຄມີອື່ນໆ ຮັບໃຊ້ ການກະສິກຳ | ກ/ຊ ອຄ |
| | 2029 | ການຜະລິດຕະພັນເຄມີອື່ນໆ ທີ່ບໍ່ທັນຈັດເຂົ້າບ່ອນໃດ | ກ/ຊ ອຄ |
| | 2100 | ຜະລິດຢາປົວພະຍາດ, ຜະລິດຕະພັນເຄມີໃຊ້ປຸງແຕ່ງຢາ ແລະ ຜະລິດຕະພັນການຢາຈາກພືດ. | ກ/ຊ ສທ |
| ການສະໜອງນ້ຳ, ລະບາຍນ້ຳເສຍ , ການບໍລິຫານຈັດການ ແລະ ການເຄື່ອນໄຫວບຳບັດສິ່ງເສດເຫຼືອ | | | |
| | 3600 | ການເກັບຮັກສາ, ບຳບັດ ແລະ ສະໜອງນ້ຳ | ກ/ຊ ຍທຂ |
| | 3700 | ການບຳບັດສິ່ງໂສໂຄກທາງທໍ່ລະບາຍ | ກ/ຊ ຍທຂ |
| | 3812 | ການເກັບມ້ຽນສິ່ງເສດເຫຼືອທີ່ເປັນອັນຕະລາຍ | ກ/ຊ ຍທຂ |
| | 3822 | ການຮັກສາ ແລະ ການກຳຈັດສິ່ງເສດເຫຼືອ ທີ່ເປັນອັນຕະລາຍ | ກ/ຊ ຍທຂ |

| | | | |
|---|---|---|---|
| **ການຄ້າຂາຍຍົກ ແລະ ຂາຍຍ່ອຍ; ສ້ອມແປງລົດຍົນ ແລະ ລົດຈັກ** | | | |
| | 4661 | ຂາຍຍົກທາດແຂງ, ທາດແຫຼວ ແລະ ນ້ຳມັນເຊື້ອໄຟ ແລະ ຜະລິດຕະພັນທີ່ກ່ຽວຂ້ອງ ( ສຳລັບ ISIC ນີ້ ໃຫ້ກວດສະເພາະແຕ່ທຸລະກິດການນຳເຂົ້າ ແລະ ຂາຍຍົກນ້ຳມັນເຊື້ອໄຟ ເຊັ່ນ: ປະເພດນ້ຳມັນກາຊວນ, ນ້ຳມັນແອັດຊັງ ແລະ ອາຍແກັສ ) | ກ/ຊ ອຄ |
| | 4662 | ການຂາຍຍົກ ໂລຫະ ແລະ ແຮ່ໂລຫະ(ສຳລັບ ISIC ນີ້ ໃຫ້ກວດສະເພາະແຕ່ທຸລະກິດ ນຳເຂົ້າ-ສົ່ງອອກ ຄຳແທ່ງ ແລະ ເມັດເງິນ) | ທຫລ |
| **ການຂົນສົ່ງ ແລະ ສາງສິນຄ້າ** | | | |
| | 4911 | ການຂົນສົ່ງຜູ້ໂດຍສານທາງລົດໄຟ | ກ/ຊ ຍທຂ |
| | 4912 | ການຂົນສົ່ງສິນຄ້າທາງລົດໄຟ | ກ/ຊ ຍທຂ |
| | 4922 | ການຂົນສົ່ງໂດຍສານທາງບົກ ອື່ນໆ | ກ/ຊ ຍທຂ |
| | 4930 | ການຂົນສົ່ງທາງທໍ່ | ກ/ຊ ຍທຂ |
| | 5021 | ການຂົນສົ່ງຜູ້ໂດຍສານທາງນ້ຳ | ກ/ຊ ຍທຂ |
| | 5110 | ການຂົນສົ່ງຜູ້ໂດຍສານທາງອາກາດ | ກ/ຊ ຍທຂ |
| | 5120 | ການຂົນສົ່ງສິນຄ້າທາງອາກາດ | ກ/ຊ ຍທຂ |
| | 5310 | ການເຄື່ອນໄຫວດ້ານໄປສະນີ | ກ/ຊ ປທສ |
| **ການເຄື່ອນໄຫວ ດ້ານທີ່ພັກເຊົາ ແລະ ບໍລິການອາຫານ** | | | |
| | 5510 | ການເຄື່ອນໄຫວໃຫ້ທີ່ພັກເຊົາໄລຍະສັ້ນ | ກ/ຊ ຖວທ |
| **ດ້ານຂໍ້ມູນຂ່າວສານ ແລະ ການຕິດຕໍ່ສື່ສານ** | | | |
| | 5811 | ການພິມປື້ມອ່ານ | ກ/ຊ ຖວທ |
| | 5813 | ການພິມຂ່າວສານໜັງສືພິມ, ບົດຄວາມ ແລະ ວາລະສານ | ກ/ຊ ຖວທ |
| | 5819 | ການເຄື່ອນໄຫວຈັດພິມ ອື່ນໆ | ກ/ຊ ຖວທ |
| | 5911 | ການຜະລິດຮູບເງົາ, ວີດີໂອ ແລະ ລາຍການໂທລະພາບ | ກ/ຊ ຖວທ |
| | 5912 | ການເຕີມແຕ່ງຮູບເງົາ, ວີດີໂອ ແລະ ລາຍການໂທລະພາບ | ກ/ຊ ຖວທ |
| | 5913 | ກິດຈະກຳແຈກຈ່າຍຮູບເງົາ, ວີດີໂອ ແລະ ລາຍການໂທລະພາບ | ກ/ຊ ຖວທ |
| | 5914 | ກິດຈະກຳ ການສາຍຮູບເງົາ | ກ/ຊ ຖວທ |
| | 5920 | ກິດຈະກຳຈັດພິມບົດເພງ ແລະ ບັນທຶກສຽງ | ກ/ຊ ຖວທ |
| **ການເຄື່ອນໄຫວດ້ານການເງິນ ແລະ ການປະກັນໄພ** | | | |
| | 6419 | ການບໍລິການເປັນສື່ກາງດ້ານການເງິນອື່ນໆ | ທຫລ |
| | 6420 | ບໍລິສັດຖືຮຸ້ນ | ກະຊວງການເງິນ |
| | 6430 | ຄັງເງິນ, ກອງທຶນ ແລະ ກົງຈັກການເງິນອື່ນໆ | ທຫລ |
| | 6491 | ການເຊົ່າຊື້ດ້ານການເງິນ | ທຫລ |
| | 6492 | ການໃຫ້ສິນເຊື່ອອື່ນໆ | ທຫລ |

| | | | |
|---|---|---|---|
| | 6499 | ກິດຈະກຳ ບໍລິການດ້ານການເງິນອື່ນໆ ຍົກເວັ້ນການເຄື່ອນໄຫວປະກັນໄພ ແລະ ຄັງບໍານານ | ທຫລ |
| | 6511 | ການປະກັນຊີວິດ | ກ/ຊ ກງ |
| | 6512 | ການປະກັນໄພອື່ນໆ ນອກຈາກປະກັນຊີວິດ | ກ/ຊ ກງ |
| | 6520 | ການປະກັນໄພຮັບຊ່ວງຕໍ່ | ກ/ຊ ກງ |
| | 6530 | ຄັງບໍານານ | ກ/ຊ ກງ |
| | 6611 | ການບໍລິຫານຕະຫຼາດການເງິນ | ກ/ຊ ກງ |
| | 6612 | ການຄໍ້າປະກັນ ແລະ ສັນຍາຊື້ຂາຍນາຍໜ້າ | ກ/ຊ ກງ |
| | 6619 | ບັນດາກິດຈະກໍາຊ່ວຍໜູນ ກິດຈະກໍາການບໍລິການດ້ານການເງິນ | ກ/ຊ ກງ |
| | 6630 | ການເຄື່ອນໄຫວບໍລິຫານກອງທຶນ | ກ/ຊ ກງ |
| ການເຄື່ອນໄຫວດ້ານສາຍວິຊາຊີບ, ວິທະຍາສາດ ແລະ ເຕັກນິກ | | | |
| | 6910 | ການເຄື່ອນໄຫວດ້ານນິຕິກໍາ ( ສະເພາະທະນາຍຄວາມ ) | ກ/ຊ ຍຸຕິທໍາ |
| | 6920 | ເຄື່ອນໄຫວດ້ານການບັນຊີ, ການສະຫຼຸບສັງລວມ ແລະ ກວດສອບ; ປຶກສາດ້ານພາສີອາກອນ ( ສະເພາະ ການບັນຊີ ແລະ ການກວດສອບເອກະລາດ ) | ກ/ຊ ກງ |
| ການເຄື່ອນໄຫວບໍລິການສະໜັບສະໜູນ ແລະ ຄຸ້ມຄອງ ບໍລິຫານ | | | |
| | 7810 | ການເຄື່ອນໄຫວ ຂອງອົງການຈັດຫາງານ | ກ/ຊ ຮສສ |
| | 7912 | ການດໍາເນີນກິດຈະການ ທ່ອງທ່ຽວ | ກ/ຊ ຖວທ |
| ການສຶກສາ | | | |
| | 8510 | ການສຶກສາຊັ້ນປະຖົມ | ກ/ຊ ສສກ |
| | 8521 | ການສຶກສາຊັ້ນມັດທະຍົມທົ່ວໄປ | ກ/ຊ ສສກ |
| | 8522 | ການສຶກສາດ້ານເຕັກນິກ ແລະ ວິຊາຊີບ | ກ/ຊ ຮສສ ແລະ ກ/ຊ ສສກ |
| | 8530 | ການສຶກສາຊັ້ນສູງ | ກ/ຊ ສສກ |
| | 8541 | ການສຶກສາດ້ານກິລາ ແລະ ການບັນເທີງ | ກ/ຊ ສສກ |
| ການເຄື່ອນໄຫວກ່ຽວກັບສຸຂະພາບມະນຸດ ແລະ ບັນດາວຽກງານທາງສັງຄົມ | | | |
| | 8610 | ກິດຈະການ ໂຮງໝໍ | ກ/ຊ ສທ |
| | 8620 | ກິດຈະການທາງດ້ານການແພດ ແລະ ພັນຕະກໍາ | ກ/ຊ ສທ |
| | 8690 | ກິດຈະກໍາດ້ານສາທາລະນະສຸກ ອື່ນໆ | ກ/ຊ ສທ |
| ດ້ານສິນລະປະ, ການບັນເທີງ ແລະ ພັກຜ່ອນ | | | |
| | 9000 | ການປະດິດ, ສິນລະປະ ແລະ ການເຄື່ອນໄຫວບັນເທີງ | ກ/ຊ ຖວທ |
| | 9102 | ກິດຈະການຫໍພິພິດຕະພັນ ແລະ ການດໍາເນີນການສະຖານທີ່ ແລະ ອາຄານປະຫວັດສາດ | ກ/ຊ ຖວທ |

| | | |
|---|---|---|
| 9200 | ກິດຈະການການສ່ຽງໂຊກ ແລະ ການພະນັນຕ່າງໆ | ກ/ຊ ຖວທ ແລະ ກ/ຊ ກງ |
| 9321 | ກິດຈະກໍາສວນສະໜຸກ | ກ/ຊ ຖວທ |

**ໝາຍເຫດ :**

1. ບັນຊີ ກ. 02-68/ນຍ.2012 ສະບັບປັບປຸງ ປ່ຽນແທນ ແລະ ລົບລ້າງ ບັນຊີເອກະສານຄັດຕິດ " ກ " ລວມມີທັງໝົດ 67 ກິດຈະການ ( ຕາມລະຫັດ ISIC );

2. ປະເພດທຸລະກິດໃນບັນຊີ ກ.02-68/ນຍ.2012 ແມ່ນລວບລວມ ມາຈາກການຄົ້ນຄວ້າ ສະເໜີຂອງບັນດາກະຊວງ ທີ່ກ່ຽວຂ້ອງ.